# ສິລະປະຄວາມກ້າວໜ້າເທື່ອລະກ້າວ: ບໍລິສັດຍີ່ປຸ່ນມີຄວາມຊ່ຽວຊານດ້ານນະວັດຕະກໍາໄດ້ແນວໃດ?

*ໂດຍ: ນິລຸດ ແກ້ວມະນີ, ແສງອາລຸນ ຄອງຫຼ້າຫຼຽນ*

## ບົດນໍາ: ຄວາມລັບເບື້ອງຫຼັງຄວາມສໍາເລັດ

ເມື່ອເຮົາຄິດເຖິງບໍລິສັດຊັ້ນນໍາລະດັບໂລກຂອງຍີ່ປຸ່ນ ເຮົາມັກຈະຄິດເຖິງບໍລິສັດໂຕໂຢຕ້າ, ຟູຈິຟິມ, ໂຊນີ, NEC ບໍລິສັດຍັກໃຫຍ່ຂອງຍີ່ປຸ່ນເຫຼົ່ານີ້ທີ່ເຮົາສາມາດພົບເຫັນຜະລິດຕະພັນໄດ້ຕາມບ້ານເຮືອນ ເຊິ່ງມີຊື່ສຽງດ້ານຄຸນນະພາບ ແລະ ປະສິດທິພາບ ເຊິ່ງຢູ່ໃນຕະຫຼາດໂລກທີ່ມີການແຂ່ງຂັນກັນຢ່າງດຸເດືອດ. ແຕ່ບໍລິສັດເຫຼົ່ານີ້ບັນລຸ ແລະ ຮັກສາຄວາມສໍາເລັດໃນລະດັບໂລກໄດ້ແນວໃດ?, ມັນແມ່ນຊ່ວງເວລາບົດດຽວຂອງອັດສະລິຍະທີ່ປະດິດສິ່ງຂອງສາມາດປ່ຽນແປງໂລກໄດ້ພຽງໄລຍະເວລາວຂ້າມຄືນຫຼືບໍ່?.

ຄໍາຕອບທີ່ເຮົາໄດ້ສໍາຫຼວດມັກຈະລະອຽດ ແລະ ເລິກເຊິ່ງຫຼາຍ, ສ່ວນປະສົມລັບທີ່ຢູ່ເບື້ອງຫຼັງຄວາມສໍາເລັດທີ່ຍືນຍົງຂອງພວກເຂົາເຈົ້າ ຄືແນວຄິດທີ່ມີປະສິດທິພາບສອງປະການຄື: **ນະວັດຕະກໍາທີ່ເພີ່ມຂຶ້ນ** ສິລະປະໃນການປັບປຸງເທື່ອລະໜ້ອຍຢ່າງຕໍ່ເນື່ອງ ແລະ **ຄວາມສາມາດແບບປັບປ່ຽນໄດ້** ການປັບຕົວພັດທະນາຄວາມສາມາດໃຫ້ເຂົ້າກັບໂລກທີ່ມີການປ່ຽນແປງຢູ່ຕະຫຼອດເວລາ.

ໃນການສຶກສາຄັ້ງນີ້ເຮົາຈະເຈາະເລິກແນວຄິດເລື່ອງລາວຂອງບໍລິສັດມຸລາຕະ (Murata), ຟູຈິຟິມ (Fujifilm) ແລະ ໂຕໂຢຕ້າ (Toyota) ເປົ້າໝາຍຄືການສ້າງແບບຈໍາລອງທາງແນວຄິດນະວັດຕະກໍາທີ່ສາມາດນໍາໄປປະຍຸກໃຊ້ໄດ້ທຸກບ່ອນ ໂດຍຊີ້ໃຫ້ເຫັນວ່າປັດຊະຍາຮ່ວມກັນຂອງຄວາມກ້າວໜ້າເທື່ອລະກ້າວດ້ວຍຄວາມອົດທົນ ເຮັດໃຫ້ບໍລິສັດເຫຼົ່ານີ້ບໍ່ພຽງແຕ່ຂະຫຍາຍໂຕ ແຕ່ຍັງປ່ຽນແປງຕົນເອງໂດຍພື້ນຖານໄດ້ແນວໃດ?.

## 1. ຮາກຖານ: ປັດຊະຍາຄວາມກ້າວໜ້າທີ່ແຕກຕ່າງ

### 1.1 ເລີ່ມຕົ້ນດ້ວຍແວ່ນ: ພະລັງຂອງການລອກຮຽນແບບຢ່າງອັດສະລິຍະ

ອຸດສາຫະກໍາທີ່ປະສົບຄວາມສໍາເລັດສູງສຸດຂອງຍີ່ປຸ່ນຫຼາຍແຫ່ງບໍ່ໄດ້ເລີ່ມຕົ້ນດ້ວຍການປະດິດເອງທຸກຢ່າງຕັ້ງແຕ່ເລີ່ມຕົ້ນ, ການເດີນທາງຂອງພວກເຂົາມັກຈະເລີ່ມຕົ້ນດ້ວຍບາດກ້າວທໍາອິດທີ່ຊົງພະລັງຄື ການລອກຮຽນແບບທີ່ຊານສະຫຼາດ ພວກເຂົາເລີ່ມດ້ວຍການສັງເກດ, ຮຽນແບບເຕັກໂນໂລຢີ ແລະ ລະບົບຈາກປະເທດອື່ນຢ່າງລະມັດລະວັງ. ຕົວຢ່າງທີ່ສົມບູນແບບຄືລະບົບການຜະລິດຂອງໂຕໂຢຕ້າ (Toyota Production System) ທີ່ມີຊື່ສຽງລະດັບໂລກ ເຊິ່ງເປັນແບບຈໍາລອງຂອງປະສິດຕິພາບການຜະລິດທີ່ການພັດທະນາບໍ່ໄດ້ເລີ່ມຕົ້ນໃນຫ້ອງທົດລອງການຂັ້ນສູງ ແຕ່ໄດ້ຮັບແຮງບັນດານໃຈຈາກການໄປຢ້ຽມຢາມບໍລິສັດ Lockheed Aircraft ຂອງອາເມລິກາ ແລະ ໄດ້ສັງເກດເຫັນວ່າໃນຊຸບເປີມາເກັດ ລູກຄ້າຈະຈັບເອົາສິນຄ້າໃນຈໍານວນທີ່ເຂົາຕ້ອງການຈາກຊັ້ນວາງເຄື່ອງ ແລະ ເມື່ອສິນຄ້າຖືກຈັບອອກໄປ ພະນັກງານກໍຈະເຕີມສິນຄ້ານັ້ນໃຫ້ເຕັມຊັ້ນວາງເຄື່ອງຕາມຄວາມ ເໝາະສົມ.

ຄວາມຊານສະຫຼາດຂອງໂຕໂຢຕ້າບໍ່ແມ່ນພຽງແຕ່ການຮຽນແບບແນວຄິດເທົ່ານັ້ນ ແຕ່ຍັງເປັນການປັບປຸງແນວຄິດໃຫ້ເຂົ້າກັບຄວາມຕ້ອງການສະເພາະຂອງ

ຕົນເອງ. ສິ່ງສຳຄັນຈາກນັ້ນ, ຄືການເດີນທາງທີ່ຍາວນານຫຼາຍທົດສະວັດໃນການປັບປຸງຢ່າງຕໍ່ເນື່ອງ. ຂະບວນການຮຽນຮູ້ຈາກຜູ້ອື່ນກ່ອນທີ່ຈະສ້າງແນວຄິດທີ່ບໍ່ຄືໃຜໃນແບບຂອງຕົນເອງຈະຊ່ວຍສ້າງຮາກຖານສຳລັບການພັດທະນາປັບປຸງຢ່າງຕໍ່ເນື່ອງ.

**1.2 ກົນໄກແຫ່ງຄວາມກ້າວໜ້າ: ນະວັດຕະກຳທີ່ເພີ່ມຂຶ້ນແບບຄ່ອຍເປັນຄ່ອຍໄປ**

ເມື່ອວາງຮາກຖານແລ້ວຄວາມກ້າວໜ້າຈະຖືກຂັບເຄື່ອນໂດຍປັດຊະຍາຂອງການປັບປຸງແບບຕໍ່ເນື່ອງເທື່ອລະກ້າວນ້ອຍໆ, ແນວຄິດນີ້ເປັນສູນກາງການຈັດການຂອງຍີ່ປຸ່ນທີ່ມີຊື່ສຽງຄື Kaizen ທີ່ແປວ່າ "ການປັບປຸງຢ່າງຕໍ່ເນື່ອງ" ເປັນເຄື່ອງຈັກທີ່ຂັບເຄື່ອນຄວາມສຳເລັດໃນໄລຍະຍາວ. ແນວທາງທີ່ເອີ້ນວ່າ ນະວັດຕະກຳທີ່ເພີ່ມຂຶ້ນ ແມ່ນກົງກັນຂ້າມກັບຄວາມກ້າວໜ້າທີ່ກ້າວກະໂດດ ທີ່ມັກຈະເຊື່ອມໂຍງກັບຄຳວ່າ ນະວັດຕະກຳ.

| ກ້າວເທື່ອລະກ້າວ ທີ່ສະໝໍ່າສະເໝີ | ການກ້າວກະໂດດຄັ້ງໃຫຍ່ |
|---|---|
| ປະສົມປະສານ*ຄວາມຮູ້ທີ່ກ່ຽວຂ້ອງ ແລະ ຄວາມຮູ້ທີ່ມີຢູ່* ເພື່ອປັບແຕ່ງຜະລິດຕະພັນ ແລະ ຂະບວນການທີ່ມີຢູ່ຢ່າງຕໍ່ເນື່ອງ | ຮວບຮວມ*ຄວາມຮູ້ຈາກແຫຼ່ງອື່ນ ແລະ ບໍ່ກ່ຽວຂ້ອງກັນ* ເພື່ອສ້າງຕະຫຼາດ ຫຼື ໝວດໝູ່ຜະລິດຕະພັນໃໝ່ທັງໝົດ |
| ນີ້ຄືຈຸດແຂງທົ່ວໄປຂອງບໍລິສັດຍີ່ປຸ່ນ ໂດຍການສ້າງຄວາມເປັນເລີດຜ່ານການປັບແຕ່ງ | Apple iPhone ເຄື່ອງທຳອິດເປັນຕົວຢ່າງຂອງການສ້າງນະວັດຕະກຳທີ່ຮຸນແຮງ ແລະ ສ້າງຕະຫຼາດໃໝ່ |

ຄວາມແຕກຕ່າງລະຫວ່າງກ້າວເທື່ອລະກ້າວ ແລະ ການກ້າວກະໂດດຄັ້ງໃຫຍ່ນີ້ບໍ່ໄດ້ເປັນພຽງທິດສະດີເທົ່ານັ້ນ. ແຕ່ຍັງເຮັດໃຫ້ຮູ້ວ່າການປັບປຸງທີ່ເພີ່ມມະຫາສານສາມາດສ້າງຜູ້ນຳລະດັບໂລກໄດ້ແນວໃດ, ຕໍ່ໄປເຮົາຈະມາຮຽນຮູ້ເລື່ອງລາວໃນໂລກຄວາມເປັນຈິງຂອງ Murata Manufacturing.

## 2. ກໍລະນີຕົວຢ່າງ: ພູເຂົາແຫ່ງບາດກ້າວເທື່ອລະກ້າວຂອງມູລາຕະ (MURATA)

### 2.1. ຈາກເຊລະມິກເສົາໄຟຟ້າ ສູ່ ສະໝອງກົນ: ການເດີນທາງຂອງການເພີ່ມເຕີມຄວາມຮູ້

ເລື່ອງລາວຂອງ Murata Manufacturing ເປັນລະດັບຂັ້ນປະລາມາຈານໃນນະວັດຕະກຳທີ່ເພີ່ມຂຶ້ນ. ບໍລິສັດບໍ່ໄດ້ເລີ່ມຈາກການຜະລິດສ່ວນປະກອບເຕັກໂນໂລຊີຂັ້ນສູງທີ່ຊັບຊ້ອນທີ່ໃຊ້ໃນໂທລະສັບມືຖື ແລະ ຄອມພິວເຕີໃນປະຈຸບັນ, ທຸລະກິດດັ້ງເດີມຂອງມູລາຕະແມ່ນງ່າຍກວ່ານັ້ນຫຼາຍ. ວິວັດທະນາການຂອງມູລາຕະສະແດງໃຫ້ເຫັນວ່າການເພີ່ມຄວາມຮູ້ໃໝ່ເທື່ອລະຢ່າງສາມາດປ່ຽນແປງບໍລິສັດໄດ້ແນວໃດ.

1) ***ຈຸດເລີ່ມຕົ້ນ:*** ຜະລິດຕະພັນດັ້ງເດີມຂອງພວກເຮົາແມ່ນເຊລາມິກກັນຄວາມຮ້ອນທີ່ໃຊ້ຈັບຍຶດສາຍເທິງເສົາໄຟຟ້າ, ຄວາມຮູ້ຫຼັກຂອງພວກເຂົາແມ່ນກ່ຽວກັບເຊລາມິກ.
2) ***ຂັ້ນຕອນທຳອິດ:*** ຈາກນັ້ນມູລາຕະໄດ້ຮວບຮວມຄວາມຮູ້ດ້ານເຊລາມິກທີ່ມີຢູ່ເຂົ້າກັບຄວາມຮູ້ໃໝ່ກ່ຽວກັບໄຟຟ້າ, ການປະສົມປະສານໃໝ່ນີ້ເຮັດໃຫ້ພວກເຂົາສາມາດຜະລິດຊິ້ນສ່ວນອີເລັກໂຕນິກອັນທຳອິດໄດ້ຄືຄາປາຊິເຕີ (capacitor)
3) ***ວິວັດທະນາການຢ່າງຕໍ່ເນື່ອງ:*** ບໍລິສັດບໍ່ເຄີຍຫຍຸດພັກຂະບວນການນີ້ ພວກເຂົາຍັງຄົງໄດ້ຮັບຄວາມຮູ້ໃໝ່ປະສົມປະສານກັບຄວາມຊຳນານຢ່າງເລິກເຊິ່ງ ແລະ ພັດທະນາຊິ້ນສ່ວນອີເລັກໂຕນິກທີ່ຊັບຊ້ອນ ແລະ ມີຄຸນນະພາບສູງຂຶ້ນເລື້ອຍໆ.




ມູລາຕະບໍ່ເຄີຍເຮັດການກ້າວກະໂດດແບບຄັ້ງໃຫຍ່ທີ່ເປັນໄປບໍ່ໄດ້, ພວກເຂົາຂຶ້ນສູ່ລະດັບສູງສຸດຂອງອຸດສາຫະກຳອີເລັກໂຕນິກຢ່າງມີຄວາມມານະອົດທົນຜ່ານຜ່າຂະບວນການຮຽນຮູ້, ການຮວບຮວມ ແລະ ປັບປຸງຢ່າງຕໍ່ເນື່ອງ ແລະ ເປັນລະບຽບ. ເພື່ອໃຫ້ເຂົ້າໃຈທິດສະດີເບື້ອງຫຼັງຄວາມສຳເລັດໃນທາງປະຕິບັດນີ້ ເຮົາສາມາດຫັນໄປໃຊ້ແນວຄິດຂອງ "ຄວາມສາມາດແບບປັບປ່ຽນໄດ້".

## 2.2 ມູລາຕະ ແລະ ຟູຈິຟິມ ພະລັງໃນຄວາມສາມາດແບບປັບປ່ຽນໄດ້

ທິດສະດີຄວາມສາມາດແບບປັບປ່ຽນໄດ້ອາດຟັງຊັບຊ້ອນ ແຕ່ເປັນແນວຄິດງ່າຍໆ, ເປັນຄວາມສາມາດຂອງບໍລິສັດໃນການໄດ້ຮັບຊັບພະຍາກອນໃໝ່ຢ່າງຕໍ່ເນື່ອງ ແລະ ປັບຕົວເຂົ້າກັບໂລກທີ່ປ່ຽນແປງຢ່າງຊຳນານ ເປັນພະລັງອຳນາດທີ່ຊ່ວຍໃຫ້ບໍລິສັດເຕີບໃຫຍ່ໄດ້ໃນໄລຍະຍາວ ແລະ ປະກອບດ້ວຍ 3 ຂັ້ນຕອນຫຼັກ.

### *1) ສຳຜັດໂອກາດ*

ຂັ້ນຕອນທຳອິດນີ້ກ່ຽວກັບການທຳຄວາມເຂົ້າໃຈສິ່ງທີ່ເກີດຂຶ້ນໃນໂລກພາຍນອກ ແລະ ຮັບຮູ້ເຖິງການປ່ຽນແປງໃນຕະຫຼາດ, ເປັນຕົ້ນແມ່ນ ບໍລິສັດຟູຈິຟິມ (Fujifilm) ທີ່ຮັບຮູ້ໄດ້ວ່າ ໃນອະນາຄົດການເພີ່ມຂຶ້ນຂອງເຕັກໂນໂລຢີດີຈິຕອນຈະເຮັດໃຫ້ຄວາມຕ້ອງການຟິມຖ່າຍຮູບຫຼຸດລົງຢ່າງຫຼວງຫຼາຍ ແລະ ຄວາມຮັບຮູ້ນີ້ເປັນບາດກ້າວທຳອິດທີ່ສຳຄັນທີ່ເຮັດໃຫ້ບໍລິສັດຂອງພວກເຂົາຢູ່ລອດໄດ້.

### *2) ການສະແຫວງຫາເອົາຊັບພະຍາກອນໃໝ່ເມື່ອຮັບຮູ້ວ່າມີການປ່ຽນແປງ*

ບໍລິສັດຕ້ອງໄດ້ກຳນົດ ແລະ ຮວບຮວມຄວາມຮູ້ ຫຼື ເຕັກໂນໂລຢີໃໝ່ທີ່ຈຳເປັນໃນການປັບຕົວ, ນີ້ແມ່ນສິ່ງທີ່ມູລາຕະເຮັດໃນການປ່ຽນຈາກເຊລາມິກກັນຄວາມຮ້ອນທຳມະດາໄປສູ່ອີເລັກໂຕນິກຄາປາຊິເຕີ: ພວກເຂົາເນັ້ນໜັກວ່າຈຳເປັນຕ້ອງຮຽນຮູ້ກ່ຽວກັບໄຟຟ້າ, ການສະແຫວງຫາຄວາມຮູ້ໃໝ່ນັ້ນເປັນຂັ້ນຕອນທີສອງທີ່ສຳຄັນຫຼາຍ.

### *3) ປ່ຽນ ແລະ ປັບໂຄງສ້າງໃໝ່*

ຂັ້ນຕອນສຸດທ້າຍຄືການຮວບຮວມຄວາມຮູ້ໃໝ່ເຂົ້າກັບຄວາມສາມາດທີ່ມີຢູ່ຂອງບໍລິສັດເພື່ອສ້າງຜະລິດຕະພັນໃໝ່ ຫຼື ປັບປ່ຽນທຸລະກິດ. ເຊິ່ງມູລາຕະເຮັດເປັນຮອບວຽນຢູ່ແບບນີ້ ໂດຍປ່ຽນໂຕເອງຈາກຜູ້ຜະລິດເຊລາມິກທຳມະດາກາຍເປັນຜູ້ນຳລະດັບໂລກໃນດ້ານຊິ້ນສ່ວນອີເລັກໂຕນິກຂັ້ນສູງ. ຟູຈິຟິມກໍເຮັດເຊັ່ນດຽວກັນ ໂດຍການຮັບຮູ້ເຖິງການປ່ຽນແປງດ້ານຕະຫຼາດຟິມຖ່າຍຮູບ ແລະ ປ່ຽນທຸລະກິດເພື່ອໃຫ້ຢູ່ລອດ ແລະ ເຕີບໃຫຍ່ຂະຫຍາຍໂຕ.

ເລື່ອງລາວຂອງມູລາຕະສະແດງໃຫ້ເຫັນວ່າບໍລິສັດໃຊ້ຄວາມສາມາດແບບປັບປ່ຽນໄດ້ໃນເຊີງລຸກເພື່ອເຕີບໂຕ, ໃນຂະນະທີ່ເລື່ອງລາວຂອງຟູຈູຟິມສະແດງໃຫ້ເຫັນວ່າບໍລິສັດໃຊ້ຄວາມສາມາດເຫຼົ່ານີ້ເພື່ອຄວາມ







ຢູ່ລອດ. ທັງສອງບໍລິສັດສະແດງໃຫ້ເຫັນເຖິງພະລັງຂອງ "ມະຫາອຳນາດຄວາມສາມາດແບບປັບປ່ຽນໄດ້".

3. **ກໍລະນີຕົວຢ່າງ: ຟູຈິຟິມກັບການເຂົ້າກັນໄດ້ຂອງສອງອຸດສາຫະກຳ**

Fujifilm ບໍລິສັດທີ່ມີຊື່ສຽງດ້ານກ້ອງ ແລະ ຟີມຖ່າຍຮູບໄດ້ຫັນເຂົ້າສູ່ອຸດສາຫະກຳເຄື່ອງສຳອາງເພື່ອສ້າງຄວາມຫຼາກຫຼາຍ ແລະ ເພື່ອຄວາມຢູ່ລອດ ໂດຍໃຊ້ປະໂຫຍດຈາກເຕັກໂນໂລຢີຫຼັກດ້ານຟີມຖ່າຍຮູບ

ໂດຍສະເພາະການວິໄຈຄໍລາເຈນ (collagen), ສານຕ້ານອະນຸມູນອິດສະລະ (antioxidants) ແລະ ນາໂນເຕັກໂນໂລຢີ (nanotechnology) ເຊິ່ງໄດ້ພັດທະນາມາເປັນຜະລິດຕະພັນດ້ານຄວາມງາມຍີ່ຫໍ້ 'ASTALIFT' ທີ່ມີຊື່ສຽງແລະໄດ້ຮັບລາງວັນຜະລິດຕະພັນຕ້ານຄວາມແກ່ສະລາ.

| **ເຕັກໂນໂລຢີຕ້ານອະນຸມູນອິດສະລະ** | **ການວິໄຈຄໍລາເຈນ** |
|---|---|
| ສານເຄມີທີ່ພັດທະນາຂຶ້ນເພື່ອປ້ອງກັນການເກີດປະຕິສຳພັນ (oxidation) ແລະ ການຈືດຈາງຂອງສີໃນຮູບຖ່າຍທີ່ມີປະສິດຕິພາບໃນການປ້ອງກັນຜິວຈາກຄວາມເສຍຫາຍ ແລະ ຮອຍແກ່ສະລາ | ການວິໄຈຂອງຟູຈິກ່ຽວກັບຄໍລາເຈນເພື່ອຮັກສາຄຸນນະພາບຟີມຖ່າຍຮູບນັ້ນສາມາດນຳໄປໃຊ້ໂດຍກົງກັບຜະລິດຕະພັນເບິ່ງແຍງຜິວ ເພາະຄໍລາເຈນເປັນສ່ວນປະກອບສຳຄັນທີ່ຊ່ວຍໃຫ້ຜິວໜັງເກີດຄວາມຍືດຍຸ່ນ. |
| **ການວິໄຈແສງ ແລະ ຄວາມຄຸມ** | **ນາໂນເຕັກໂນໂລຢີ** |
| ຄວາມຊ່ຽວຊານໃນການເຮັດປະຕິກິລິຍາຂອງແສງກັບຟີມຖ່າຍຮູບ ນຳໄປສູ່ການພັດທະນາຜະລິດຕະພັນເຄື່ອງສຳອາງທີ່ຊ່ວຍໃຫ້ຜິວສະທ້ອນແສງ, ສົດໃສ ແລະ ສວຍງາມເປັ່ງປະກາຍ | ການປັບແຕ່ງຄຸນນະພາບຟີມຖ່າຍຮູບ ຖືກນຳມາໃຊ້ເພື່ອພັດທະນາສ່ວນປະສົມທີ່ມີປະສິດຕິພາບສູງເຊັ່ນແອສຕາແຊນທິນ (astaxanthin) ສຳລັບຜະລິດຕະພັນເບິ່ງແຍງຜິວທີ່ສ້າງຄວາມງາມລະດັບນາໂນ |

ການປ່ຽນແປງຈາກຟິມຖ່າຍຮູບໄປສູ່ຜະລິດຕະພັນດ້ານຄວາມງາມທີ່ປະສົບຄວາມສຳເລັດ ເຮັດໃຫ້ຟູຈິສາມາດຄົ້ນພົບການເຮັດວຽກເຂົ້າກັນໄດ້ລະຫວ່າງສອງສາຂາທີ່ເບິ່ງແລ້ວຄືບໍ່ກ່ຽວຂ້ອງກັນ ແຕ່ສາມາດສ້າງໃຫ້ກາຍເປັນຜະລິດຕະພັນຍີ່ຫໍ້ໃໝ່.

**4. ກໍລະນີຕົວຢ່າງ: ບໍລິສັດໂຕໂຢຕ້າກັບການສະແຫວງຫາຄວາມສົມບູນແບບທີ່ບໍ່ຢຸດຢັ້ງ**

ຄວາມສຳເລັດທີ່ຍືນຍົງຂອງໂຕໂຢຕ້າແມ່ນສ້າງຂຶ້ນຈາກລະບົບການຜະລິດຂອງໂຕໂຢຕ້າ (Toyota Production System) ທີ່ມີຊື່ສຽງລະດັບໂລກ ເຊິ່ງເປັນຕົວຢ່າງທີ່ດີທີ່ສຸດຂອງການປັບປຸງຢ່າງຕໍ່ເນື່ອງໃນການປະຕິບັດ. ຕາມທີ່ໄດ້ກ່າວໃນເບື້ອງຕົ້ນນັ້ນ ການເດີນທາງຂອງລະບົບການຜະລິດຂອງໂຕໂຢຕ້າເລີ່ມຕົ້ນດ້ວຍການຮຽນແບບແນວຄິດການປັບປຸງຫຼັກການຂອງຮ້ານຊຸບເປີມາເກັດ. ເຖິງຢ່າງໃດກໍຕາມ, ສິ່ງທີ່ສຳຄັນທີ່ສຸດຂອງເລື່ອງນີ້ຄືສິ່ງທີ່ໂຕໂຢຕ້າບໍ່ໄດ້ພຽງແຕ່ຮຽນແບບລະບົບ ແລະ ນຳໄປໃຊ້ກັບບໍລິສັດທັງໝົດ, ບໍລິສັດໃຊ້ເວລາ 6 ປີໃນການລອງຜິດລອງຖືກພາຍໃນໂຮງງານອຸດສາຫະກຳແຫ່ງດຽວ, ພວກເຂົາເຮັດວຽກຢ່າງບໍ່ຢຸດຢ່ອນເພື່ອປັບປ່ຽນ, ດັດແປງ ແລະ ເຮັດໃຫ້ລະບົບສົມບູນແບບສຳລັບຄວາມຕ້ອງການສະເພາະຂອງພວກເຂົາກ່ອນທີ່ຈະຂະຫຍາຍອອກໄປບ່ອນອື່ນ. ການອຸທິດຕົນນີ້ເນັ້ນຍ້ຳເຖິງແກ່ນແທ້ຂອງປັດຊະຍາທີ່ພວກເຂົາມຸ່ງໝັ້ນຢ່າງບໍ່ໜ້າເຊື່ອຕໍ່ໄຄເຊັນ (Kaizen). ຄວາມເຂັ້ມແຂງທີ່ແທ້ຈິງບໍ່ໄດ້ມາຈາກການນຳແນວຄິດໃໝ່ໆມາໃຊ້ ແຕ່ມາຈາກການຂັດເກົາຢ່າງອົດທົນຈົນກາຍເປັນຜະລິດຕະພັນແຫ່ງຄຸນນະພາບ ແລະ ປະສິດຕິພາບທີ່ຮຽນແບບໄດ້ຍາກ.

**5. ກໍລະນີຕົວຢ່າງ: ການປ່ຽນແປງຢ່າງຕໍ່ເນື່ອງຂອງບໍລິສັດ NEC**

ບໍລິສັດ NEC ເປັນທຸລະກິດທຳອິດຂອງຍີ່ປຸ່ນທີ່ລົງທຶນໂດຍຕ່າງປະເທດ ກໍ່ຕັ້ງຂຶ້ນໃນປີ 1899 ດ້ວຍປັດຊະຍາ "ຜະລິດຕະພັນທີ່ດີກວ່າ, ບໍລິການທີ່ດີກວ່າ" ວິໄສທັດປັດຈຸບັນຂອງບໍລິສັດແມ່ນຍັງຄືເກົ່າກັບມື້ທີ່ບໍລິສັດໄດ້ຖືກກໍ່ຕັ້ງຂຶ້ນຄື "ເພື່ອສະໜອງຜະລິດຕະພັນລະດັບໂລກ ແລະ ບໍລິການທີ່ໜ້າເຊື່ອຖື".

ບໍລິສັດ NEC ຍັງຄົງຮັກສາຕຳແໜ່ງຜູ້ນຳດ້ານເຕັກໂນໂລຢີລະດັບໂລກດ້ວຍການປະສົມປະສານລະຫວ່າງຫຼັກການພື້ນຖານຂອງບໍລິສັດ ແລະ ວັດທະນະທຳລິເລີ່ມເປັນຜູ້ປະກອບການ ທີ່ຊ່ວຍປູກຝັງ-ສົ່ງເສີມໃຫ້ພະນັກງານມີຄວາມກ້າຫານ, ມີແນວຄິດສ້າງສັນ ແລະ ບໍ່ຢ້ານສິ່ງທ້າທາຍຢູ່ຕະຫຼອດເວລາ.

ການປ່ຽນແປງບໍ່ເຄີຍຢຸດຢັ້ງຂອງບໍລິສັດ NEC ເພາະບໍລິສັດມີການປ່ຽນແປງຢ່າງຕໍ່ເນື່ອງ. ເຊິ່ງການປ່ຽນແປງຈາກການນຳເຂົ້າ ແລະ ຈຳໜ່າຍລະບົບສະວິດໃນປີ 1899 ມາເປັນແນວຄິດການນຳໃຊ້ຄອມພິວເຕີ ແລະ ການສື່ສານ 'C&C' ໃນປີ 1977. ແລະເມື່ອບໍ່ດົນມານີ້ບໍລິສັດໄດ້ພັດທະນາມາເປັນການສ້າງມູນຄ່າທີ່ເໜັ້ນເປົ້າໝາຍໃນການແກ້ບັນຫາສັງຄົມດ້ວຍເຕັກໂນໂລຢີດິຈິຕອນ.

**6. ສະຫຼຸບ: ບົດຮຽນຈາກປະລາມາຈານດ້ານນະວັດຕະກຳ**

ຄວາມສຳເລັດຂອງບໍລິສັດຕ່າງໆ ເຊັ່ນ ມູລາຕະ, ຟູຈິຟິມ ແລະ ໂຕໂຢຕ້າ ບໍ່ແມ່ນເລື່ອງລາວຂອງຊ່ວງເວລາອັດສະລິຍະປ່ຽນໂລກແບບຂ້າມຄືນ, ແຕ່ເປັນຂໍ້ພິສູດຂອງປັດຊະຍາທີ່ຝັງເລິກຂອງການປັບຕົວຢ່າງຕໍ່ເນື່ອງ ແລະ ການປັບປຸງເທື່ອລະຂັ້ນຕອນຢ່າງບໍ່ຢຸດຢັ້ງ. ການເດີນທາງຂອງພວກເຂົາເປັນບົດຮຽນທີ່ຈະແຈ້ງ ແລະ ບົດບາດສຳຄັນສຳລັບຜູ້ທີ່ຕ້ອງການຮຽນຮູ້ ຫຼື ເອົາໄປນຳໃຊ້, ເຊິ່ງສະຫຼຸບປະເດັນສຳຄັນໄດ້ດັ່ງນີ້:

1) *ການກ້າວກະໂດດຄັ້ງໃຫຍ່ບໍ່ແມ່ນວິທີດຽວທີ່ຈະຊະນະ:* ການປັບປຸງເລັກໆນ້ອຍໆ ທີ່ສະໝໍ່າສະເໝີ (ນະວັດຕະກໍາທີ່ເພີ່ມຂຶ້ນ) ສາມາດສ້າງຄວາມເຂັ້ມແຂງລະດັບຊັ້ນນໍາຂອງຕະຫຼາດເມື່ອເວລາຜ່ານໄປ. ຂັ້ນໄດນ້ອຍໆຂອງພູເຂົາແຫ່ງບາດກ້າວເພື່ອລະກ້າວອາດຈະເປັນທີ່ໜ້າຢ້ານກວ່າການກ້າວກະໂດດພຽງຄັ້ງດຽວທີ່ເຕັມໄປດ້ວຍຄວາມສ່ຽງ.
2) *ການປັບຕົວ ຫຼື ລົ້ມລະລາຍ ໃນໂລກທີ່ມີປ່ຽນແປງຢູ່ສະເໝີ:* ບໍລິສັດທີ່ປະສົບຄວາມສໍາເລັດຫຼາຍທີ່ສຸດກໍາລັງຮັບຮູ້ເຖິງການປ່ຽນແປງເຫຼົ່ານີ້ຢູ່ຕະຫຼອດເວລາ (ເຊັ່ນ ຟູຈິຟິມທີ່ປະເຊີນໜ້າກັບການປະຕິວັດດິຈິຕອນ) ແລະ ຄວາມສາມາດແບບປັບປ່ຽນໄດ້ ໃນການຮັບຄວາມຮູ້ໃໝ່ ແລະ ປ່ຽນແປງຕົນເອງ (ເຊັ່ນ ມຸລາຕະ ທີ່ພັດທະນາຈາກເຊລາມິກມາເປັນອີເລັກໂຕນິກ).
3) *ເລີ່ມຕົ້ນດ້ວຍການຮຽນຮູ້ ຈາກນັ້ນພັດທະນາເຮັດໃຫ້ເປັນຂອງເຮົາເອງ* ຄື ການລອກຮຽນແບບຢ່າງອັດສະລິຍະ (ເຊັ່ນ ໂຕໂຢຕ້າ) ເປັນຈຸດເລີ່ມຕົ້ນທີ່ຊົງພະລັງ ແຕ່ຄວາມສໍາເລັດແບບຍືນຍົງທີ່ແທ້ຈິງມາຈາກການດັດແກ້ແນວຄິດເລີ່ມຕົ້ນເຫຼົ່ານັ້ນ ແລະ ພັດທະນາໃຫ້ເປັນລະບົບທີ່ເໜືອກວ່າ ແລະ ບໍ່ຄືໃຜ ທີ່ເໝາະສົມກັບເປົ້າໝາຍຂອງຕົນເອງຢ່າງສົມບູນແບບ.ຫຼັກການຮຽນຮູ້ຢ່າງຕໍ່ເນື່ອງ, ການປັບຕົວ ແລະ ການປັບປຸງເພື່ອລະກ້າວຢ່າງຕໍ່ເນື່ອງບໍ່ພຽງແຕ່ໃຊ້ສໍາລັບທຸລະກິດເທົ່ານັ້ນ, ສາມາດນໍາໄປໃຊ້ກັບສາຂາວິຊາ, ໂຄງການສ່ວນຕົວ ຫຼື ອາຊີບໃດກໍໄດ້. ເຊິ່ງພິສູດໃຫ້ເຫັນວ່າສິນລະປະຂອງຜູ້ທີ່ອົດທົນປັບປຸງເພື່ອລະກ້າວຢ່າງສະໝໍ່າສະເໝີເປັນກະແຈສໍາຄັນໃນການບັນລຸຄວາມເປັນເລີດ.

**ເອກະສານອ້າງອີງ:**


NEC. Evolving up. https://www.nec.com/en/global/solutions/finance/article/report01.html

Nippon.com. Fujifilm Finds New Life in Cosmetics. https://www.nippon.com/en/features/c00511/

Fujifilm Holding Corporation. History. https://holdings.fujifilm.com/special/90th/en/history/#y2000

Murata Innovator in Electronics. History. https://corporate.murata.com/en-us/company/history

Toyota Production System. https://global.toyota/en/company/vision-and-philosophy/production-system/

Transcript from the Japanese Management Style course by Dr. Funabashi. Lectured on August 18-22, 2025, at Laos-Japan Institute.